ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ: 06775 /ກພສ

ນະຄອນຫຼວງວຽງຈັນ,ວັນທີ: 09 ພະຈິກ 2018

# ບົດແນະນຳ

## ການຄຸ້ມຄອງແລະນຳໃຊ້ໃບຕິດຕາມການເຄື່ອນຍ້າຍ ນ້ຳມັນເຊື້ອໄຟ ( ເສຍພາສີ-ອາກອນ ) ດ້ວຍຕົນເອງ

- ອີງຕາມ ກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍພາສີສະບັບປັບປຸງບາງມາດຕາ ສະບັບເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017 ວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ.
- ອີງຕາມ ແຈ້ງການ ຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 3463 /ກງ, ລົງວັນທີ 29 ຕຸລາ 2018.

## ກົມພາສີອອກບົດແນະນຳດັ່ງນີ້ :

**ມາດຕາ 1: ຈຸດປະສົງ:**

ບົດແນະນຳສະບັບນີ້ມີຈຸດປະສົງເພື່ອກຳນົດຫຼັກການ, ລະບຽບການໃນການຄຸ້ມຄອງ ແລະ ນຳໃຊ້ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງແນໃສ່ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການແລະເພື່ອອຳນວຍຄວາມສະດວກໃນການຈໍລະຈອນສິນຄ້າໂດຍສະເພາະປະເພດນ້ຳມັນເຊື້ອໄຟພາຍຫຼັງການນຳເຂົ້າເສຍພາສີ - ອາກອນ ແລະ ພັນທະອື່ນຖືກຕ້ອງຄົບຖ້ວນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 2: ການອະທິບາຍຄຳສັບ.**

1. <u>ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງ.</u>
   ໝາຍເຖິງໃບຢັ້ງຢືນການໃຫ້ສິດໂດຍເຈົ້າໜ້າທີ່ພາສີແກ່ເຈົ້າຂອງສິນຄ້າໃນການເຄື່ອນຍ້າຍນ້ຳມັນເຊື້ອໄຟຈາກແຂວງໜຶ່ງໄປແຂວງອື່ນ ພາຍຫຼັງນ້ຳມັນເຊື້ອໄຟດັ່ງກ່າວໄດ້ຮັບການຢັ້ງຢືນການເສຍພາສີ - ອາກອນ ແລະ ພັນທະອື່ນໆຈາກດ່ານພາສີບ່ອນນຳເຂົ້າເປັນທີ່ຮຽບຮ້ອຍແລ້ວ.
2. <u>ຕົ້ນທາງ</u>: ໝາຍເຖິງສະຖານທີ່ໆບໍລິສັດນຳເຂົ້ານ້ຳມັນເຊື້ອໄຟໄດ້ແຈ້ງເສຍ ພາສີ - ອາກອນ ແລະ ພັນທະອື່ນ ແລະ ເປັນບ່ອນເກັບຮັກສານ້ຳມັນເຊື້ອໄຟໄວ້ເພື່ອລໍຖ້າການຈຳໜ່າຍ ຫຼື ເຄື່ອນຍ້າຍ.
3. <u>ປາຍທາງ</u>: ໝາຍເຖິງສະຖານທີ່ຕັ້ງຂອງສາງບ່ອນເກັບມ້ຽນນ້ຳມັນເຊື້ອໄຟທີ່ເຄື່ອນຍ້າຍມາຈາກບ່ອນອື່ນ ຫຼື ປ້ຳຈຳໜ່າຍນ້ຳມັນເຊື້ອໄຟ.

**ມາດຕາ3: ເງື່ອນໄຂຂອງບໍລິສັດທີ່ຂໍສະເໜີອອກໃບເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງ.**

1. ຕ້ອງມີໃບທະບຽນດຳເນີນທຸລະກິດກ່ຽວກັບການນຳເຂົ້ານ້ຳມັນເຊື້ອໄຟ.
2. ມີໃບທະບຽນອາກອນ ແລະ ໃບຕິດຕາມການຊຳລະອາກອນປະຈຳປີ.
3. ມີລະບົບສາງເກັບມ້ຽນນ້ຳມັນເຊື້ອໄຟທີ່ໄດ້ມາດຕະຖານ.

4. ຖືລະບົບບັນຊີທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຊຶ່ງສາມາດກວດສອບໄດ້.
5. ມີລົດບັນທຸກນໍ້າມັນເຊື້ອໄຟທີ່ໄດ້ມາດຕະຖານ ແລະ ໄດ້ຮັບການຢັ້ງຢືນຈາກຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 4: ຂັ້ນຕອນການຂໍອະນຸຍາດອອກໃບຕິດຕາມເຄື່ອນຍ້າຍນໍ້າມັນດ້ວຍຕົນເອງ.**

1. ບໍລິສັດຈະຕ້ອງສະເໜີເປັນລາຍລັກອັກສອນເຖິງກົມພາສີ.
- ໂດຍຄັດຕິດໃບທະບຽນດໍາເນີນທຸລະກິດການນໍາເຂົ້ານໍ້າມັນເຊື້ອໄຟ, ໃບທະບຽນອາກອນ ແລະ ອື່ນໆ ຈາກຂະແໜງການກ່ຽວຂ້ອງ.
- ມີແບບຢ່າງກາຈໍ້າ ແລະ ລາຍເຊັນ ຂອງຜູ້ທີ່ມີສິດໃນການອອກໃບຕິດຕາມໃບເຄື່ອນຍ້າຍນໍ້າມັນພາຍໃນບໍລິສັດຂອງຕົນ.
- ມີບົດບັນທຶກການກວດກາສະຖານທີ່ທີ່ຕັ້ງຂອງສາງນໍ້າມັນເຊື້ອໄຟທີ່ໄດ້ມາດຕະຖານ ( ດ່ານຕົ້ນທາງ ) ໂດຍການເຊັນຮັບຮູ້ຂອງເຈົ້າໜ້າທີ່ພາສີ ແລະ ຂະແໜງການທີ່ກ່ຽວຂ້ອງ.
2. ກົມພາສີຈະເປັນຜູ້ພິຈາລະນາ ແລະ ອະນຸມັດຕາມເງື່ອນໄຂ ແລະ ອອກຂໍ້ຕົກລົງມອບສິດໃຫ້ບໍລິສັດ ແລະ ສາມາດອອກໃບຕິດຕາມການເຄື່ອນຍ້າຍນໍ້າມັນເຊື້ອໄຟດ້ວຍຕົນເອງ.

**ມາດຕາ 5: ແບບພິມທີ່ຈະນໍາໃຊ້ໃນການເຄື່ອນຍ້າຍນໍ້າມັນເຊື້ອໄຟ.**

- ການອອກເອກະສານເຄື່ອນຍ້າຍນໍ້າມັນເຊື້ອໄຟດ້ວຍຕົນເອງ ຈະຕ້ອງນໍາໃຊ້ແບບພິມ " ໃບຕິດຕາມການເຄື່ອນຍ້າຍ " ເອີ້ນວ່າ ບ 88 ຊະນິດເປັນປຶ້ມ ຊຶ່ງກົມພາສີເປັນຜູ້ຈັດພິມ, ຄຸ້ມຄອງ, ແຈກ ຢາຍໃຫ້ບໍລິສັດຜູ້ທີ່ມີເງື່ອນໄຂຄົບຖ້ວນ ແລະ ໄດ້ຮັບສິດຈາກກົມພາສີ ຕາມມາດຕາ 3 - 4 ຂ້າງເທິງ.
- ນໍ້າມັນເຊື້ອໄຟທີ່ຈະເຄື່ອນຍ້າຍໃນແຕ່ລະຄັ້ງຕ້ອງມີແຫຼ່ງທີ່ມາທີ່ຖືກຕ້ອງຊັດເຈນ ໂດຍອີງໃສ່ໃບແຈ້ງພາສີເປັນລາຍລະອຽດ ( IM 4 ) ແລະ ຕ້ອງມີເອກະສານຢັ້ງຢືນການ ເສຍພາສີ - ອາກອນ ແລະ ພັນທະຈາກດ່ານພາສີບ່ອນນໍາເຂົ້າທີ່ມີອາຍຸບໍ່ເກີນ 03 ເດືອນ ( ນັບແຕ່ວັນທີ່ລະບຸ IM 4 ) ຖ້າຫາກເກີນກໍານົດ ຜູ້ປະກອບການຫາກມີຈຸດປະສົງເຄື່ອນຍ້າຍນໍ້າມັນເຊື້ອໄຟຈໍານວນດັ່ງກ່າວຈະຕ້ອງນໍາສະເໜີກອງຄຸ້ມຄອງພາສີບ່ອນທີ່ຕົນຂຶ້ນກັບເປັນຜູ້ພິຈາລະນາ.

**ມາດຕາ 6: ຂັ້ນຕອນຂອງການອອກໃບເຄື່ອນຍ້າຍນໍ້າມັນເຊື້ອໄຟດ້ວຍຕົນເອງ.**

1. ເຈົ້າຂອງສິນຄ້າ ຫຼື ຜູ້ນໍາ ເຂົ້ານໍ້າມັນເຊື້ອໄຟທີ່ໄດ້ຮັບອານຸຍາດຕ້ອງອອກໃບຕິດຕາມການເຄື່ອນຍ້າຍນໍ້າມັນເຊື້ອໄຟຈາກ ແຂວງໜຶ່ງໄປແຂວງອື່ນໄດ້ດ້ວຍຕົນເອງ ເພື່ອເປັນເອກະສານຕິດຕາມ ການເຄື່ອນຍ້າຍ.
2. ກ່ອນຈະເຄື່ອນຍ້າຍນໍ້າມັນເຊື້ອໄຟໃນແຕ່ລະຄັ້ງ, ຜູ້ປະກອບການຕ້ອງໄດ້ກວດກາປະເພດຂອງນໍ້າມັນເຊື້ອໄຟ, ຈໍານວນ, ຫົວໜ່ວຍ, ຂະໜາດບັນຈຸຂອງພາຫະນະຂົນສົ່ງ, ເອກະສານປະກອບຂອງການນໍາເຂົ້າໃນແຕ່ລະຄັ້ງ ( ໃບແຈ້ງພາສີເປັນລາຍລະອຽດ ), ກໍານົດຕົ້ນທາງ - ປາຍທາງໃຫ້ຊັດເຈນ, ຊື່ຜູ້ຂັບລົດ, ເບີໂທຕິດຕໍ່ ແລະ ເລກທະບຽນຂອງພາຫະນະເພື່ອປະກອບຂໍ້ມູນລົງໃນໃບຕິດຕາມການເຄື່ອນຍ້າຍ.
3. ໃບຕິດຕາມການເຄື່ອນຍ້າຍນໍ້າມັນເຊື້ອໄຟຕ້ອງບໍ່ມີການຂີດຂ້າ, ດັດແປງ ຫຼື ດັດແກ້ຂໍ້ມູນແຕ່ຢ່າງເດັດຂາດ. ໃນກໍລະນີເກີດຂໍ້ຜິດພາດພາຍຫຼັງປະກອບຂໍ້ມູນໃສ່ເອກກະສານເປັນທີ່ຮຽບຮ້ອຍແລ້ວເຊັ່ນ: ລົດບັນທຸກນໍ້າມັນເປ່ເພ, ການປ່ຽນຜູ້ຂັບລົດ ຫຼື ເຫດຜົນອື່ນໆທີ່ຈໍາເປັນ, ເອກະສານດັ່ງກ່າວຈະຕ້ອງຖືກລຶບລ້າງ ແລະ ໃຫ້ຄັດຕິດໃສ່ປຶ້ມຕິດຕາມການເຄື່ອນຍ້າຍນໍ້າມັນເຊື້ອໄຟ ແລະ ໃຫ້ລະບຸ " ລຶບລ້າງ " ເພື່ອເປັນຂໍ້ມູນໃນການກວດກາຄືນ.
4. ການອອກໃບຕິດຕາມການເຄື່ອນຍ້າຍນໍ້າມັນເຊື້ອໄຟດ້ວຍຕົນເອງແຕ່ລະຄັ້ງ 01 ຊຸດ ປະກອບດ້ວຍ 04 ສະບັບຄື: ສະບັບທີ 01 ມອບໃຫ້ຜູ້ຂັບລົດເພື່ອຕິດຕາມເວລາເຄື່ອນຍ້າຍ, ສະບັບທີ 02 ສົ່ງລວມສະຫຼຸບ

ສົ່ງໃຫ້ຂະແໜງສ່ວຍສາອາກອນທີ່ຂຶ້ນກັບ, ສະບັບທີ 03 ສັງລວມສະຫຼຸບສົ່ງໃຫ້ກອງຄຸ້ມຄອງພາສີທີ່ຕົນຂຶ້ນກັບ, ສະບັບທີ 04 ສຳເນົາໄວ້ກັບປຶ້ມຕິດຕາມ ( ບໍລິສັດເກັບຮັກສາໄວ້ )

ການຄຸ້ມຄອງ ແລະ ການຕິດຕາມ ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງແມ່ນໃຫ້ປະຕິບັດດັ່ງນີ້ :

4.1. ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟສະບັບທີ່ 01 (ສຳລັບຜູ້ຂັບລົດເພື່ອຕິດຕາມເວລາເຄື່ອນຍ້າຍ ) ຕ້ອງຄັດຕິດສຳເນົາໃບແຈ້ງພາສີເປັນລາຍລະອຽດ (IM4) ແລະ ໃບຢັ້ງຢືນຮັບເງິນຄ່າພາສີ - ອາກອນ ແລະ ພັນທະອື່ນຈາກດ່ານພາສີບ່ອນນຳເຂົ້າທຸກໆຄັ້ງ, ຄັດຕິດບົງສັ່ງຈ່າຍ ຫຼື ບິນອາກອນ ( ໃນກໍລະນີມີການຂາຍ ).

4.2. ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ 01 ຊຸດ ແມ່ນອອກໃຫ້ສະເພາະລົດບັນທຸກນ້ຳມັນ 01 ຄັນເທົ່ານັ້ນ.

4.3. ໃນກໍລະນີມີການເຄື່ອນຍ້າຍນ້ຳມັນເຊື້ອໄຟພາຍຫຼັງທີ່ນຳເຂົ້າຈາກດ່ານຕົ້ນທາງໄປຍັງດ່ານປາຍທາງໝົດບາດດຽວ ແມ່ນໃຫ້ຄັດຕິດສຳເນົາໃບແຈ້ງພາສີເປັນລາຍລະອຽດ ( IM 4 ) ແລະ ມອບໃຫ້ເຈົ້າໜ້າທີ່ພາສີປະຈຳດ່ານເປັນຜູ້ເຊັນຢັ້ງຢືນ.

**ມາດຕ 7: ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ອອກໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງ.**

1. ປະຕິບັດຕາມລະບຽບ ແລະ ຂັ້ນຕອນຂອງການອອກໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟຕາມທີ່ກຳນົດໄວ້ໃນມາດຕາຂ້າງເທິງ, ຜູ້ຂັບລົດຕ້ອງນຳໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟໄປແຈ້ງຕໍ່ເຈົ້າໜ້າທີ່ພາສີຢູ່ຕົ້ນທາງ ( ຈຸດປະສານງານພາສີບ່ອນທີ່ໃກ້ທີ່ສຸດຕາມເສັ້ນທາງການເຄື່ອນຍ້າຍ ) ກ່ອນການເຄື່ອນຍ້າຍທຸກໆຄັ້ງ, ເມື່ອສິນຄ້າໄປຮອດປາຍທາງຜູ້ຂັບລົດກໍຕ້ອງນຳເອົາເອກະສານດັ່ງກ່າວໄປແຈ້ງຕໍ່ເຈົ້າໜ້າທີ່ພາສີເພື່ອກວດກາ ແລະ ເຊັນຢັ້ງຢືນເອກະສານດັ່ງກ່າວແລ້ວມອບໃຫ້ເຈົ້າໜ້າທີ່ພາສີປາຍທາງເກັບມ້ຽນສຳເນົາ.
2. ສະຫຼຸບສັງລວມຕົວເລກການນຳເຂົ້າປະເພດນ້ຳມັນເຊື້ອໄຟ, ຫົວໜ່ວຍ, ຈຳນວນ, ການຈຳໜ່າຍພາຍໃນ, ການເຄື່ອນຍ້າຍໄປແຕ່ລະແຂວງ ປະຈຳເດືອນ, ງວດ, 06 ເດືອນ ແລະ ປີ, ພ້ອມທັງສະໜອງສຳເນົາເອກະສານການນຳເຂົ້າ, ປຶ້ມຕິດຕາມເຄື່ອນຍ້າຍນ້ຳມັນເຊື້ອໄຟໃຫ້ລັດຖະການພາສີບ່ອນຂຶ້ນກັບເພື່ອ ຕິດຕາມ ແລະ ກວດກາຢ່າງເປັນປົກກະຕິ.
3. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ພາສີ, ໃນການສະໜອງບັນດາເອກກະສານ ຫຼັກຖານ ທີ່ກ່ຽວຂ້ອງ, ການອະທິບາຍ ແລະ ຊີ້ແຈງ ກໍລະນີທີ່ມີການສົງໃສຂອງເຈົ້າໜ້າທີ່ໆກ່ຽວຂ້ອງ ກ່ຽວກັບແຫຼ່ງທີ່ມາຂອງນ້ຳມັນ, ຂັ້ນຕອນ ແລະ ເງື່ອນໄຂໃນການອອກໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງເພື່ອເປັນບ່ອນອີງໃນການພິຈາລະນາແກ້ໄຂບັນຫາ.

**ມາດຕາ 8: ມາດຕະການຕໍ່ຜູ້ກະທຳຜິດ.**

ຖ້າຜູ້ອອກອານຸຍາດເຄື່ອນຍ້າຍນ້ຳມັນເຊື້ອໄຟດ້ວຍຕົນເອງຫາກມີການລະເມີດຂໍ້ກຳນົດ-ລະບຽບການໃນບົດແນະນຳສະບັບນີ້, ເຊັ່ນ: ເຄື່ອນຍ້າຍນ້ຳມັນທີ່ບໍ່ທັນເສຍພາສີ; ປະກອບຂໍ້ມູນລົງໃນໃບອະນຸຍາດເຄື່ອນຍ້າຍບໍ່ຖືກຕ້ອງດ້ານຈຳນວນ, ປະເພດນ້ຳມັນ ຫຼື ຂໍ້ມູນອື່ນໆ ທີ່ບໍ່ສອດຄ່ອງກັບໃບແຈ້ງພາສີເປັນລາຍລະອຽດ; ບໍ່ນຳເອົາໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟແຈ້ງຕໍ່ເຈົ້າໜ້າທີ່ພາສີກ່ອນ ແລະ ຫຼັງການເຄື່ອນຍ້າຍນ້ຳມັນຕາມທີ່ໄດ້ກຳນົດໃນ ມາດຕາທີ 6, 7; ບໍ່ຄັດຕິດສຳເນົາໃບແຈ້ງພາສີເປັນລາຍລະອຽດ ແລະ/ຫຼື ບົງສັ່ງຈ່າຍ ຫຼືບິນອາກອນ (ກໍລະນີມີການຂາຍ) ໃສ່ໃບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟ ແຕ່ລະຄັ້ງ ແມ່ນຈະໄດ້ຖືກກ່າວເຕືອນ ແລະ/ຫຼື ດຳເນີນຄະດີຕາມກົດໝາຍພາສີ ແລະ ລະບຽບການອື່ນ ທີ່ ກ່ຽວຂ້ອງ ຂຶ້ນກັບລຳດັບຂອງການກະທຳຜິດ.

ມາດຕາ 9: ຂອບເຂດການນຳໃຊ້.

ບົດແນະນຳສະບັບນີ້ໃຊ້ສຳລັບຕິດຕາມການເຄື່ອນຍ້າຍນ້ຳມັນເຊື້ອໄຟທີ່ເສຍພາສີ - ອາກອນ ແລະ ພັນທະອື່ນເທົ່ານັ້ນ, ສ່ວນນ້ຳມັນເຊື້ອໄຟທີ່ນຳເຂົ້າໃນຮູບແບບຍົກເວັ້ນ ພາສີ - ອາກອນ ຫຼື ຮູບແບບຫຼຸດຜ່ອນ ພາສີ - ອາກອນ, ໃຫ້ປະຕິບັດຕາມບົດແນະນຳເລກທີ 03326/ກພສ, ລົງວັນທີ 10/03/2015 ວ່າດ້ວຍການຄຸ້ມຄອງການເຄື່ອນຍ້າຍສິນຄ້າພາຍໃນ ສປປ ລາວ.

ມາດຕາ 10: ກໍລະນີສຸກເສີນໃນການເຄື່ອນຍ້າຍ.

- ໃນລະຫວ່າງທີ່ມີການເຄື່ອນຍ້າຍນ້ຳມັນເຊື້ອໄຟຈາກແຂວງນຶ່ງໄປຫາແຂວງໜຶ່ງແມ່ນຕ້ອງໄດ້ແຈ້ງຈຸດປະສານງານ ( ປ້ອມກວດກາພາສີ ) ແຕ່ລະຈຸດທຸກຄັ້ງທີ່ມີການເຄື່ອນຍ້າຍ ( ບັນຊີຈຸດປະສານງານໃນແຕ່ລະແຂວງ ).
- ໃນກໍລະນີຫາກລົດເຄື່ອນຍ້າຍນ້ຳມັນຫາກເປເພ່ໃນລະຫວ່າງເສັ້ນທາງ ຜູ້ຂັບລົດ ຫລື ບໍລິສັດຕ້ອງໄດ້ແຈ້ງໃຫ້ຕົ້ນທາງ ຫລື ປາຍທາງ ຫລື ຈຸດປະສານງານ ( ປ້ອມກວດກາພາສີ ) ທີ່ໃກ້ສຸດເພື່ອຊາບ.
- ໃນກໍລະນີປາຍທາງຫາກບໍ່ມີຫ້ອງການຂອງເຈົ້າໜ້າທີ່ພາສີປະຈຳຢູ່ ແມ່ນໃຫ້ເຈົ້າຂອງ ສາງ/ຫຼືປ້ຳນ້ຳມັນເຊື້ອໄຟເປັນຜູ້ເຊັນຢັ້ງຢືນການເຄື່ອນຍ້າຍນ້ຳມັນດັ່ງກ່າວ ແລະ ນຳໄປສົ່ງດ່ານພາສີຕົ້ນທາງເພື່ອຕິດຕາມ ແລະ ຢັ້ງຢືນຄວາມຖືກຕ້ອງ.

ມາດຕາ 11: ການຈັດຕັ້ງປະຕິບັດ.

ມອບໃຫ້ພະແນກອອ້ມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ດ່ານພາສີສາກົນທົ່ວປະເທດ, ກອງກວດກາພາສີປະຈຳແຂວງ ເປັນເຈົ້າການໃນການເຜີຍແຜ່-ອະທິບາຍ ໂດຍປະສານສົມທົບກັບສະມາຄົມຜູ້ນຳເຂົ້ານ້ຳມັນເຊື້ອໄຟ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍບົດແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 12: ຜົນສັກສິດ.

ບົດແນະນຳສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ